9450

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 2218 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 22 ກໍລະກົດ 2025

# ໜັງສືເຊີນເຂົ້າຮ່ວມການປະມູນ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້ -ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ບົດບັນທຶກກອງປະຊຸມ ສະບັບເລກທີ 1697/ຫກ, ລົງວັນທີ 10 ກໍລະກົດ 2025;
- ອີງຕາມ ໜັງສືສະເໜີ ຂອງພະແນກບໍລິຫານ ແລະ ພິທີການ ສະບັບເລກທີ 1113/ພບຫພ, ລົງວັນທີ 14 ກໍລະກົດ 2025.

1. ຫ້ອງການ ກະຊວງການເງິນ ຂໍເຊີນບັນດາບໍລິສັດ, ຫ້າງ ແລະ ຮ້ານ ຕ່າງໆ ທີ່ສົນໃຈ ແລະ ມີມາດຖານເງື່ອນໄຂຄົບຖ້ວນ ເຂົ້າຮ່ວມຍື່ນຊອງປະມູນ ສໍາລັບການສະໜອງລິຂະສິດ ອຸປະກອນ ຮັກສາຄວາມປອດໄພຂໍ້ມູນ, ໄລຍະການສະໜອງລິຂະສິດດັ່ງກ່າວ ແມ່ນເປັນເວລາ 03 ປີ;
2. ການປະມູນຈະດໍາເນີນໄປຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ໃຫ້ບໍລິສັດ, ຫ້າງ ແລະ ຮ້ານ ຕ່າງໆ ທີ່ດໍາເນີນທຸລະກິດຢູ່ ສປປ ລາວ ເຊິ່ງມີເງື່ອນໄຂຄົບຖ້ວນເຊັ່ນ: ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວຜູ້ເສຍອາກອນ, ໃບຢັ້ງຢືນການປະຕິບັດພັນທະພາສີອາກອນ;
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ຕິດຕໍ່ພົວພັນເອກະສານ ໄດ້ທີ່ ພະແນກບໍລິຫານ ແລະ ພິທີການ, ຫ້ອງການກະຊວງການເງິນ (ເບີໂທລະສັບ: 020 98971987, 020 77777330) ໃນໂມງລັດຖະການ, ນັບແຕ່ວັນທີ...22 ກໍລະກົດ - 26 ສິງຫາ 2025, ລາຄາຊອງປະມູນ 2,000,000 ກີບ (ສອງລ້ານກີບຖ້ວນ) ແລະ ຈໍານວນເງິນດັ່ງກ່າວນີ້ ແມ່ນຈະບໍ່ມີການສົ່ງຄືນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ ໑໔:໐໐ ໂມງ, ຂອງວັນທີ 26 ສິງຫາ ທີ່ຫ້ອງປະຊຸມ ຊັ້ນ 04, ຕຶກ B..., ກະຊວງການເງິນ ແລະ ຊອງປະມູນເປີດກວ້າງຈະໄດ້ເປີດໃນເວລາ...໑໔:໑໐.....ໂມງ, ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ພ້ອມດ້ວຍແບບຟອມທີ່ກໍານົດໄວ້ໃນເອກະສານປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຫົວໜ້າຫ້ອງການ

ກະຊວງການເງິນ ຫ້ອງການ

ສົມຈິດ ຄໍາມຸງຄຸນ